# SCALING PROJECT NEWSLETTER

*Issue 4 - June 2020*

## Partnership for Improved Nutrition in Lao PDR Pillar 3: Sustainable Change Achieved through Linking Improved Nutrition and Governance

## ຍິນດີຕ້ອນຮັບ!

**ພື້ນທີ່ໂຄງການ**

**4 ແຂວງ**
ຫຼວງພະບາງ, ຫຼວງນໍ້າທາ, ຜົ້ງສາລີ ແລະ ຫົວພັນ

**14 ເມືອງ**

**420 ບ້ານ**
210 ບ້ານຢູ່ແຂວງຫຼວງພະບາງ
100 ບ້ານຢູ່ແຂວງຫຼວງນໍ້າທາ
80 ບ້ານຢູ່ແຂວງຜົ້ງສາລີ
30 ບ້ານຢູ່ແຂວງຫົວພັນ




ຂໍສະແດງຄວາມຍິນດີຕ້ອນຮັບທ່ານເຂົ້າສູ່ຈົດໝາຍຂ່າວປະຈໍາ 6 ເດືອນສະບັບທີ 4 ຂອງພວກເຮົາ! ຈົດໝາຍຂ່າວສະບັບນີ້ ມີຈຸດປະສົງສະເໜີຂ່າວສານໃໝ່ ແລະ ລາຍງານ ຄວາມຄືບໜ້າກ່ຽວກັບການຈັດຕັ້ງປະຕິບັດ ໂຄງການຮ່ວມມືປັບປຸງດ້ານໂພຊະນາການ (SCALING) ໃຫ້ດີຂຶ້ນ, ຊຶ່ງແມ່ນອົງການຊ່ວຍເຫຼືອເດັກ (SCI), ອົງການ CARE, ຄະນະກໍາມະການຮ່ວມມືກັບປະເທດລາວ (CCL) ແລະ ອົງການຊາຍຟັນ (ChildFund) ເປັນຜູ້ຈັດຕັ້ງປະຕິບັດ ພາຍໃຕ້ທຶນສະໜັບສະໜູນຈາກສະຫະພາບເອີຣົບ (EU) ແລະ ແຜນງານການສະໜັບສະໜູນ ໂຄງການຮ່ວມມື ເພື່ອສົ່ງເສີມວຽກງານໂພຊະນາການ ຢູ່ໃນ ສປປ ລາວ ໃຫ້ດີຂຶ້ນ (PIN).

ຈຸດປະສົງໂດຍລວມຂອງພວກເຮົາ ແມ່ນເພື່ອປັບປຸງພາວະ ໂພຊະນາການ ຂອງໄວໜຸ່ມຍິງ, ແມ່ຍິງຖືພາ ແລະ ແມ່ຍິງລ້ຽງລູກດ້ວຍນົມແມ່, ແລະ ເດັກນ້ອຍທີ່ມີອາຍຸລຸ່ມ 5 ປີ ຢູ່ໃນ 14 ເມືອງ ຂອງ 4 ແຂວງ ພາກເໜືອມີຄື: ຫຼວງພຣະບາງ, ຫຼວງນໍ້າທາ, ຜົ້ງສາລີ ແລະ ຫົວພັນ ໃຫ້ດີຂຶ້ນ. ກິດຈະກໍາຕ່າງໆ ໄດ້ດໍາເນີນການໄປຕາມແຜນປະຕິບັດງານຍຸດທະສາດແຫ່ງຊາດດ້ານໂພຊະນາການ (NNSAP) ຂອງລັດຖະບານລາວ ແລະ ແນວທາງປະຕິບັດ ຕ່າງໆ ທີ່ສອດຄ່ອງ. ໂຄງການນີ້ ເລີ່ມດໍາເນີນການ ນັບແຕ່ ເດືອນທັນວາ 2017 ຈົນເຖິງ ເດືອນທັນວາ 2021. (ໄລຍະເວລາ 4 ປີ)

ຈົດໝາຍຂ່າວສະບັບທີ 4 ນີ້ ພວກເຮົາຍັງມີຈຸດປະສົງລາຍງານກ່ຽວກັບຜົນການປະເມີນໄລຍະກາງຂອງການປະຕິບັດໂຄງການ. ນອກຈາກນີ້ພວກເຮົາ ຕ້ອງການລາຍງານຜົນສໍາເລັດ ແລະ ຄວາມຄືບໜ້າກ່ຽວກັບການປະຕິບັດໂຄງການມາເຖິງໄລຍະເດືອນມີນາ 2020 ແລະ ການປະກອບສ່ວນຂອງໂຄງການ SCALING ຕໍ່ກັບ ມາດຕະການປ້ອງກັນພະຍາດອັກເສບປອດຮຸນແຮງ COVID-19.




**ການສື່ສານເພື່ອການປ່ຽນແປງພຶດຕິກໍາ ແລະ ຄວາມຊິນເຄີຍຂອງສັງຄົມດ້ານໂພຊະນາການ SBCC ຢູ່ຂັ້ນຊຸມຊົນ**

- **"ສັນຍາຂອງພວກເຮົາ"** ຫຼື ແຜນງານຍ່ອຍ SBCC ໄດ້ຖືກຈັດຕັ້ງປະຕິບັດຢູ່ໃນ **210** ບ້ານ
- ຜູ້ຊ່ວຍອໍານວຍຄວາມສະດວກຂັ້ນຊຸມຊົນທີ່ຈໍານວນ **746** ຄົນທີ່ຜ່ານການຝຶກອົບຮົມໄດ້ລົງຢ້ຽມຢາມຄອບຄົວ 1,000 ວັນ ຈໍານວນ **4,945** ຄອບຄົວຢ່າງເປັນປົກກະຕິ



**ການສື່ສານເພື່ອການປ່ຽນແປງພຶດຕິກໍາ ແລະ ຄວາມຊິນເຄີຍຂອງກຸ່ມໄວໜຸ່ມຢູ່ຂັ້ນໂຮງຮຽນມັດທະຍົມຕົ້ນ**

- ຜູ້ອໍານວຍຄວາມສະດວກກຸ່ມໄວໜຸ່ມຈໍານວນ **280** ຄົນ, ຍິງ **140** ຢູ່ໃນໂຮງຮຽນມັດທະຍົມຕົ້ນຈໍານວນ **79** ແຫ່ງໄດ້ຮັບການຝຶກອົບຮົມທັກສະດ້ານການອໍານວຍຄວາມສະດວກ
- ກຸ່ມເພື່ອນສອນເພື່ອນຈໍານວນ **233** ໄດ້ຮັບການແຕ່ງຕັ້ງຂຶ້ນເຊິ່ງມີສະມາຊິກກຸ່ມທັງໝົດ **3,337** ຄົນ, ຍິງ **1,655**




**ສ້າງຄວາມເຂັ້ມແຂງໃຫ້ລະບົບສາທາລະນະສຸກຂັ້ນເມືອງ (HSS)**

- ໂຮງໝໍນ້ອຍຈໍານວນ **27** ແຫ່ງໄດ້ນໍາໃຊ້ ແລະ ສົ່ງຂໍ້ມູນດ້ານສາທາລະນະສຸກຜ່ານລະບົບ **DHIS2** ຂອງລັດຖະບານ ຢ່າງເປັນປົກກະຕິ.
- ໂຮງໝໍນ້ອຍຈໍານວນ **39** ແຫ່ງ ແລະ ທີມງານແພດເຄື່ອນທີ່ເຊື່ອມສານ **7** ທີມ ໄດ້ຮັບອຸປະກອນສໍາລັບຕິດຕາມການ

Save the Children | care | ສະຫະພາບ ເອີຣົບ European Union | CCL | ChildFund Laos

ຈະເລີນເຕີບໂຕຂອງເດັກນ້ອຍ.




**ວຽກບົດບາດຍິງ-ຊາຍ ແລະ ກຸ່ມທ້ອນເງິນຂອງແມ່ຍິງ**

- ກຸ່ມທ້ອນເງິນຂອງແມ່ຍິງຈຳນວນ **91** ກຸ່ມໄດ້ຖືກສ້າງຕັ້ງຂຶ້ນຢູ່ຂັ້ນບ້ານ ແລະ ມີການເຄື່ອນໄຫວຢ່າງເປັນປົກກະຕິ
- ສະມາຊິກສະຫະພັນແມ່ຍິງຂັ້ນບ້ານຈຳນວນ **293** ຄົນໄດ້ເຂົ້າຮ່ວມຝຶກອົບຮົມດ້ານທັກສະການເປັນຜູ້ນຳ
- ສະມາຊິກສະຫະພັນແມ່ຍິງຂັ້ນບ້ານຈຳນວນ **8,228** ຄົນ ແລະ ຄູ່ຜົວເມຍຈຳນວນ **1,392** ຄູ່ໃນ **228** ບ້ານ ໄດ້ເຂົ້າຮ່ວມຝຶກອົບຮົມກ່ຽວກັບ ການແບ່ງເບົາພາລະຂອງຄອບຄົວ




**ໂຄງລ່າງພື້ນຖານທາງດ້ານນ້ຳສະອາດ, ສຸຂາພິບານ ແລະ ສຸຂະອະນາໄມ (WASH)**

- ສຳເລັດໂຄງການກໍ່ສ້າງລະບົບນ້ຳລິນຈຳນວນ **16** ໂຄງການ
- ຜົນຂອງການປະຕິບັດກິດຈະກຳການຕະຫຼາດນ້ຳ ມີຈຳນວນ **674** ຄອບຄົວໄດ້ຊື້ ແລະ ຊົມໃຊ້ເຄື່ອງຕອງນ້ຳ ແລະ ອີກຈຳນວນ **1,125** ຄອບຄົວໄດ້ສ້າງວິດຖ່າຍເປັນຂອງຕົນເອງ



**ວຽກງານບໍລິຫານຄຸ້ມຄອງໂພຊະນາການ**

- ມີຈຳນວນ **157** ບ້ານເປົ້າໝາຍໂຄງການໄດ້ສຳເລັດການສ້າງແຜນພັດທະນາບ້ານ 2020-2024 ແລະ ໄດ້ເຊື່ອມໂຍງເອົາຢ່າງໜ້ອຍ 1 ຫຼື ຫຼາຍກ່ວາ 1 ມາດຕະການທີ່ເປັນບຸລິມະສິດດ້ານໂພຊະນາການເຂົ້າໃນແຜນພັດທະນາບ້ານດັ່ງກ່າວ

**ຜົນການປະເມີນໄລຍະກາງຂອງການປະຕິບັດໂຄງການ**

ຈຸດປະສົງເພື່ອປະເມີນໄລຍະເຄິ່ງທາງຂອງການຈັດຕັ້ງປະຕິບັດໂຄງການ SCALING ແລະ ດັດປັບວິທີການບໍລິຫານຈັດການ ແລະ ປະຕິບັດ ໂຄງການທີ່ເຫັນວ່າມີຄວາມຈຳເປັນ ແລະ ຄວາມເໝາະສົມ. ໃນຊ່ວງໄລຍະເດືອນກຸມພາ ປີ 2020 ຜ່ານມານີ້ທາງໂຄງການໄດ້ມີການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງທາງພາກລັດ ແລະ ບັນດາອົງການຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ ໄດ້ລົງສຳຫຼວດເກັບກຳຂໍ້ມູນທາງດ້ານປະລິມານນຳບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງຢູ່ໃນ 5 ເມືອງເປົ້າໝາຍເປັນຕົ້ນແມ່ນ: ກຸ່ມຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ, ຜູ້ປະສານງານໂຄງການພາກລັດ, ພະນັກງານໂຄງການ SCALING ແລະ ບັນດາອົງການທີ່ກ່ຽວຂ້ອງຈຳນວນໜຶ່ງ. ໃນໄລຍະ 2-3 ເດືອນຕໍ່ໜ້ານີ້ ບັນດາອົງການຄູ່ຮ່ວມຈັດຕັ້ງປະຕິບັດໂຄງການຈະໄດ້ເຮັດການທົບທວນ ແລະ ສົນທະນາແລກປ່ຽນຕໍ່ກັບຜົນການປະເມີນ ແລະ ຂໍ້ສະເໜີແນະນຳຕ່າງໆ ພ້ອມທັງເຮັດການຕິດຕາມໜ້າວຽກທີ່ຈຳເປັນ.

**ຜົນການປະເມີນ**

ສຳລັບພາກຕໍ່ໄປນີ້ຈະໄດ້ນຳສະເໜີໝາກຜົນຄວາມສຳເລັດ, ບັນຫາສິ່ງທີ່ທ້າທາຍ ແລະ ຂໍ້ສະເໜີແນະນຳຕ່າງໆ ຂອງການເຮັດປະເມີນຜົນໄລຍະກາງເຊິ່ງປະກອບມີ 5 ຈຸດປະສົງດ້ວຍກັນດັ່ງຕໍ່ໄປນີ້:

**ຈຸດປະສົງທີ 1: ລະບົບຂອດການປະສານງານ ແລະ ການຈັດຕັ້ງປະຕິບັດກິດຈະກຳໂຄງການ**

<u>ໝາກຜົນສຳເລັດ</u>

- ບັນດາອົງການຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ SCALING ໂດຍລວມແລ້ວແມ່ນໄດ້ມີໂອກາດແລກປ່ຽນຮຽນຮູ້ບົດຮຽນ ແລະ ປະສົບການດ້ານບວກຕ່າງໆເຊິ່ງກັນ ແລະ ກັນ
- ພະນັກງານໂຄງການ SCALING ແລະ ຜູ້ປະສານງານ/ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດສ່ວນຫຼາຍແລ້ວແມ່ນເຮັດວຽກຮ່ວມກັນໄດ້ດີຫຼາຍບົນພື້ນຖານຄວາມເປັນເອກະພາບ. ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດຫຼາຍສະຫາຍມີຄວາມສົນໃຈແລກປ່ຽນຮຽນຮູ້ບົດຮຽນ ແລະ ປະສົບການນຳບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຕ່າງໆ

Save the Children care ສະຫະພາບ ເອີຣົບ European Union CCL ChildFund Laos

- ຜູ້ປະສານງານ/ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດຫຼາຍພາກສ່ວນແມ່ນໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ການຂອດການປະສານງານ ແລະ ການຮ່ວມມືທີ່ດີຕໍ່ກັນຕະຫຼອດໄລຍະຜ່ານມາຈົນເຖິງປັດຈຸບັນ
- ພະນັກງານໂຄງການໄດ້ມີການຖ່າຍທອດ ແລະ ແບ່ງປັນຄວາມຮູ້ປະສົບການ, ເຄື່ອງມື ແລະ ວິທີການໃຫ້ແກ່ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດຢ່າງເປັນປົກກະຕິ ເພື່ອເປັນການສ້າງຄວາມເຂັ້ມແຂງຮ່ວມກັນ.

<u>ບັນຫາສິ່ງທີ່ທ້າທາຍ</u>

- ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດຈຳນວນໜຶ່ງຍັງມີຄວາມຄາດຫວັງໃຫ້ແຕ່ພະນັກງານໂຄງການເປັນຜູ້ສ້າງຂີດຄວາມສາມາດ, ແບ່ງປັນຂໍ້ມູນທຸກຢ່າງ, ຕອບສະໜອງດ້ານອຸປະກອນ ແລະ ງົບປະມານໃຫ້ທ່ວງທັນກັບເວລາທີ່ຕ້ອງການ
- ຄວາມເປັນເຈົ້າການຂອງຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດຢູ່ບາງຂົງເຂດຍັງບໍ່ທັນສູງເທົ່າທີ່ຄວນ. ນອກຈາກນີ້ການຊັບຊ້ອນປ່ຽນແທນໜ້າທີ່ຕຳແໜ່ງ ແລະ ຄວາມຮັບຜິດຊອບ ຢູ່ໃນລະບົບລັດ ຍັງເປັນບັນຫາທ້າທາຍອັນໜຶ່ງຕໍ່ກັບຂອດການປະສານງານ ແລະ ການວາງແຜນປະຕິບັດໂຄງການແບບຕໍ່ເນື່ອງ
- ໃນໄລຍະຜ່ານມາທາງຂັ້ນເມືອງ ແລະ ຂັ້ນແຂວງບໍ່ທັນໄດ້ຈັດລຽງເອົາວຽກການບໍລິຫານຄຸ້ມຄອງໂພຊະນາການ (ຈຸດປະສົງສະເພາະທີ 3) ເປັນບຸລິມະສິດ ເຂົ້າໃນແຜນການ ແລະ ເຮັດໃຫ້ແຜນວຽກດັ່ງກ່າວບໍ່ໄດ້ຖືກຈັດຕັ້ງປະຕິບັດໄປຕາມຈຸດປະສົງລະດັບຄາດໝາຍ

<u>ຂໍ້ສະເໜີແນະນຳ</u>

- ສະເໜີໃຫ້ມີການສື່ສານພົວພັນ ແລະ ປຶກສາຫາລືກັບຄູ່ຮ່ວມງານພາກລັດທີ່ກ່ຽວຂ້ອງກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບໃນອົງກອນ ແລະ ພາລະບົດບາດສຳຄັນ, ການມີສ່ວນຮ່ວມ ແລະ ຄວາມເປັນເຈົ້າການຂອງແຕ່ລະພາກສ່ວນ ຕໍ່ກັບບັນດາວຽກໂຄງການທີ່ຊ່ວຍໃຫ້ເກີດການປ່ຽນແປງຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ນັບມື້ດີຂຶ້ນ
- ສະເໜີໃຫ້ມີການຈັດກອງປະຊຸມປຶກສາຫາລືກັບຄູ່ຮ່ວມງານພາກລັດທີ່ກ່ຽວຂ້ອງເພື່ອສະຫຼຸບຖອດຖອນບົດຮຽນ, ບັນຫາສິ່ງທີ່ທ້າທາຍ ຕໍ່ກັບການວາງແຜນ ແລະ ການຈັດຕັ້ງປະຕິບັດກິດຈະກຳໂຄງການໃຫ້ບັນລຸຜົນສຳເລັດ
- ສະເໜີໃຫ້ມີການປະເມີນກ່ຽວກັບບັນຫາ/ສິ່ງທີ່ທ້າທາຍຂອງຄູ່ຮ່ວມຈັດຕັ້ງປະຕິບັດໂຄງການຈາກພາກລັດ ແລະ ສິ່ງທີ່ຕ້ອງການຢາກໃຫ້ມີສະໜັບສະໜູນທາງດ້ານວິຊາການ ແລະ ການບໍລິຫານຈັດການທີ່ອາດຈະຊ່ວຍໃຫ້ເຂົາເຈົ້າມີສ່ວນເຂົ້າໃນການປະຕິບັດໂຄງການ SCALING ໄດ້ດີຂຶ້ນກ່ວາເກົ່າ

**ຈຸດປະສົງທີ 2: ທົບທວນຄຳຖາມແລກປ່ຽນຮຽນຮູ້ຂອງປີ 2018**

**ການເຮັດວຽກຮ່ວມກັບບັນດາຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ**

<u>ໝາກຜົນສຳເລັດ</u>

- ບັນດາຄູ່ຮ່ວມຈັດຕັ້ງປະຕິບັດໂຄງການໄດ້ມີລະບົບປະຊຸມວາງແຜນ, ສະຫຼຸບ-ລາຍງານ, ການຖອດຖອນບົດຮຽນກ່ຽວກັບການນຳໃຊ້ເຄື່ອງມື, ວິທີການນຳໃຊ້/ປະຕິບັດ ແລະ ການສ້າງຂີດຄວາມສາມາດດ້ານຕ່າງໆໃຫ້ກັບທີມງານ
- ທາງໂຄງການໄດ້ນຳໃຊ້ລະບົບ 'Basecamp' ເພື່ອເປັນຖານເກັບກຳຂໍ້ມູນ ແລະ ເອກະສານຕ່າງໆຂອງໂຄງການເຊິ່ງວ່າພະນັກງານໂຄງການ ແລະ ກຸ່ມວິຊາການທີ່ກ່ຽວຂ້ອງຈຳນວນໜຶ່ງສາມາດເຂົ້າເຖິງ ແລະ ເຮັດການສື່ສານຜ່ານລະບົບດັ່ງກ່າວນີ້
- ບັນດາທີມງານຄູ່ຮ່ວມຈັດຕັ້ງປະຕິບັດໂຄງການໄດ້ມີຂອດການສື່ສານ ແລະ ພົວພັນປະສານງານຮ່ວມກັນໄດ້ດີໂດຍຕະຫຼອດມາ
- ບັນດາທີ່ປຶກສາດ້ານວິຊາການຝ່າຍຕ່າງໆ ຂອງໂຄງການ ໄດ້ມີການສື່ສານ ແລະ ພົວພັນປະສານງານ ທີ່ດີຮ່ວມກັບບັນດາທີມງານໂຄງການປະຈຳພາກສະໜາມ
- ແຕ່ລະອົງການໃນນາມຄູ່ຮ່ວມຈັດຕັ້ງປະຕິບັດໂຄງການໄດ້ເປັນສະມາຊິກ ເຄືອຂ່າຍອົງການຈັດຕັ້ງທາງສັງຄົມເພື່ອໂພຊະນາການ SUN CSA ເຊິ່ງວ່າແຕ່ລະພາກສ່ວນໄດ້ມີພັນທະສັນຍາຮ່ວມກັນ ແລະ ພ້ອມທີ່ຈະໃຫ້ການສະໜັບສະໜູນການຈັດຕັ້ງປະຕິບັດຂົງເຂດວຽກງານທີ່ຕິດພັນກັບວຽກໂພຊະນາການ ຢູ່ໃນປະເທດລາວ

<u>ບັນຫາສິ່ງທີ່ທ້າທາຍ</u>

- ສຳລັບການຈັດຕັ້ງປະຕິບັດກິດຈະກຳໂຄງການໂດຍສະເພາະແມ່ນວຽກງານສະໜອງລະບົບນ້ຳ, ສຸຂາພິບານ ແລະ ສຸຂະອະນາໄມ ນັ້ນທາງພາກລັດ ແລະ ຊຸມຊົນ ເຫັນວ່າຍັງມີຄວາມຕ້ອງການຄຳປຶກສາດ້ານວິຊາການ ແລະ ການສ້າງຄວາມເຂັ້ມແຂງຫຼາຍດ້ານ
- ເຂດພື້ນທີ່ຕັ້ງໂຄງການທີ່ຫ່າງໄກກັນຢູ່ແຕ່ລະແຂວງຖືວ່າເປັນບັນຫາສິ່ງທ້າທາຍອັນໜຶ່ງສຳລັບບັນດາທີປຶກສາວິຊາການແຕ່ລະຝ່າຍ. ບາງຄັ້ງເຂົາເຈົ້າພົບຂໍ້ຫຍຸ້ງຍາກໃນເດີນທາງໄປມາເພື່ອໃຫ້ຄຳປຶກສາແລະສະໜັບສະໜູນດ້ານວິຊາການໃຫ້ທ່ວງທັນກັບເວລາທີ່ຕ້ອງການຂອງທີມງານປະຈຳຢູ່ພາກສະໜາມ
- ການສະເໜີພົວພັນເພື່ອໄປທັດສະນະຖອດຖອນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນລະຫວ່າງແຂວງນັ້ນຍັງເປັນສິ່ງທີ່ຫາຍຢູ່ ເພາະວ່າການຈັດກອງປະຊຸມຮ່ວມລະຫວ່າງແຂວງຕ້ອງໄດ້ມີການປະສານພົວພັນກັບຄູ່ຮ່ວມງານພາກລັດຫຼາຍພາກສ່ວນທີ່ກ່ຽວຂ້ອງໄປຕາມລະບົບ

<u>ຂໍ້ສະເໜີແນະນຳ</u>

- ບັນດາຄູ່ຮ່ວມຈັດຕັ້ງປະຕິບັດໂຄງການຕ້ອງໄດ້ເລັ່ງໃສ່ການວາງແຜນປະຕິບັດກິດຈະກຳໂຄງການທີ່ເຫັນວ່າຍັງມີອັນຫຼ້າຊ້າ ແລະ ແກ່ຍາວຢູ່
- ສະເໜີໃຫ້ມີການຈັດປະຊຸມປຶກສາຫາລືກັບຄູ່ຮ່ວມງານພາກລັດທີ່ກ່ຽວຂ້ອງເພື່ອສະຫຼຸບຖອດຖອນບົດຮຽນ, ບັນຫາສິ່ງທີ່ທ້າທາຍ ຕໍ່ກັບການວາງແຜນ ແລະ ການຈັດຕັ້ງປະຕິບັດກິດຈະກຳໂຄງການຢ່າງເປັນລະບົບຕໍ່ເນື່ອງ ພ້ອມທັງກຳນົດຫົວຂໍ້ຂອດການບໍລິຫານຈັດການ ແລະ ຄວາມຮູ້ດ້ານວິຊາການຕ່າງໆທີ່ຕ້ອງການສະໜັບສະໜູນໃຫ້ຊັດເຈນນຳກັນ
- ເພີ້ມທະວີຄວາມເອົາໃຈໃສ່ຕໍ່ກັບວຽກງານຂໍການສະໜັບສະໜູນຕໍ່ກັບການປະຕິບັດວຽກງານທີ່ຕິດພັນກັບໂພຊະນາການໂດຍຜ່ານລະບົບເຄືອຂ່າຍ ອົງການຈັດຕັ້ງທາງສັງຄົມເພື່ອໂພຊະນາການ SUN CSA ແລະ ໂຄງການ SCALING ສາມາດແບ່ງປັນບົດຮຽນ ຫຼື ປະສົບການ (ກໍລະນີສຶກສາ) ທີ່ສະທ້ອນໃຫ້ເຫັນວ່າມັນມີຄວາມຄືບໜ້າ ຫຼື ການປ່ຽນແປງຢູ່ຂັ້ນບ້ານຄືແນວໃດແດ່ແລ້ວ

**ການມີສ່ວນຮ່ວມຂອງອາສາສະມັກຂັ້ນບ້ານ**

<u>ໝາກຜົນສຳເລັດ</u>

- ບັນດາອາສາສະມັກຂັ້ນບ້ານທີ່ຮ່ວມກິດຈະກຳ SBCC ໄດ້ມີຄວາມຫ້າວຫັນ ແລະ ເອົາໃຈໃສ່ໃນການລົງຢ້ຽມຢາມຄອບຄົວ 1,000 ວັນຢູ່ພາຍໃນບ້ານຢ່າງເປັນປົກກະຕິ
- ບັນດາກຸ່ມໄວໜຸ່ມໄດ້ມີການຮຽນຮູ້ຄວາມຮູ້ພື້ນຖານກ່ຽວກັບການຮັກສາສຸຂະພາບ, ໂພຊະນາການ, ສຸຂະອະນາໄມ ແລະ ສາມາດຖ່າຍທອດ/ແບ່ງປັນຄວາມຮູ້ດັ່ງກ່າວໃຫ້ກັບອ້າຍເອື້ອຍນ້ອງ, ພໍ່ແມ່ ຢູ່ໃນຄອບຄົວ ແລະ ໝູ່ເພື່ອນດ້ວຍກັນ
- ບັນດາອາສາສະມັກທີ່ໄດ້ຮັບການຄັດເລືອກຢູ່ຂັ້ນບ້ານຖືວ່າເປັນຜູ້ສຳຄັນທີ່ໄດ້ປະກອບສ່ວນເຂົ້າໃນການເຄື່ອນໄຫວກິດຈະກຳໂຄງການ SCALING ຕາມໜ້າທີ່ມອບໝາຍ ແລະ ເປັນທີ່ຍອມຮັບຂອງຊຸມຊົນ

<u>ບັນຫາສິ່ງທີ່ທ້າທາຍ</u>

- ລະດັບການສຶກສາ, ລະດັບວັດທະນາທຳ ແລະ ທັກສະການນຳໃຊ້ພາສາລາວຂອງອາສາສະມັກຂັ້ນບ້ານເພື່ອສື່ສານຂໍ້ມູນ ແລະ ວິທີການປະຕິບັດວຽກຕ່າງໆກັບຊາວບ້ານ ແລະ ພາກສ່ວນອື່ນໆນັ້ນຖືວ່າຍັງມີຂໍ້ຈຳກັດຢູ່
- ເຖິງແມ່ນວ່າອາສາສະມັກຂັ້ນບ້ານເປັນທີ່ຍອມຮັບຂອງຊຸມຊົນ ອີງໃສ່ຜົນການສຶກສາໃຫ້ຮູ້ວ່າ ອາສາສະມັກຂັ້ນບ້ານຈຳນວນໜຶ່ງ ຍັງບໍ່ທັນມີຄວາມຮູ້ປະສົບການພຽງພໍ ແລະ ຂາດຄວາມໝັ້ນໃຈໃນການສິ່ງຄວາມຮູ້ພື້ນຖານດ້ານໂພຊະນາການ, ການຮັກສາສຸຂະພາບ ແລະ ສຸຂະອະນາໄມ ເຮັດໃຫ້ຊາວບ້ານຂາດຄວາມເຊື່ອໝັ້ນ
- ອາສາສະມັກຂັ້ນບ້ານຈຳນວນໜຶ່ງບາງຄັ້ງກໍ່ບໍ່ສາມາດເຂົ້າຮ່ວມປະຕິບັດກິດຈະກຳໂຄງການ SCALING ຕາມໜ້າທີ່ມອບໝາຍໄດ້ຢ່າງເຕັມທີ່ເນື່ອງຈາກວ່າເຂົາເຈົ້າຕ້ອງໄດ້ເຮັດການທຳມາຫາກິນເພື່ອຫາລ້ຽງຊີບຄອບຄົວເຊັ່ນກັນ

<u>ຂໍ້ສະເໜີແນະນຳ</u>

- ສະເໜີໃຫ້ມີການຈັດຝຶກອົບຮົມ (ຝຶກເຂັ້ມ) ໃຫ້ແກ່ອາສາສະມັກຂັ້ນບ້ານຄືນໃໝ່ ແລະ ໃຫ້ມີການຈັດກອງປະຊຸມຖອດຖອນແລກປ່ຽນຮຽນຮູ້ຂອງບັນດາອາສາສະມັກລະຫວ່າງບັນດາບ້ານເປົ້າໝາຍ

Save the Children · care · ສະຫະພາບ ເອີຣົບ European Union · CCL · ChildFund Laos

- ຄວນສື່ສານ/ອະທິບາຍໃຫ້ບັນດາອາສາສະມັກຂັ້ນບ້ານຮັບຮູ້ເຂົ້າໃຈແຈ້ງຕໍ່ກັບຜົນປະໂຫຍດ/ສິ່ງຕອບແທນນໍ້າໃຈຂອງເຂົາເຈົ້າທີ່ໄດ້ຮັບໃນຫົວຂໍ້ທີ່ວ່າ "ສັນຍາຂອງພວກເຮົາ" ແລະ ຄວາມໝາຍຄວາມສໍາຄັນການປະກອບສ່ວນຂອງເຂົາເຈົ້າໃນການປະຕິບັດກິດຈະກໍາໂຄງການ ແລະ ພ້ອມທັງປຸກລະດົມຊຸກຍູ້ການມີສ່ວນຮ່ວມຂອງເຂົາເຈົ້າໃນຕໍ່ໄປ
- ສະເໜີຕໍ່ການນໍາບ້ານ ແລະ ຄະນະພັດທະນາບ້ານໃຫ້ຄົ້ນຄ້ວາການເຮັດຍ້ອງຍໍໃນຫຼາຍຮູບແບບຕໍ່ຜົນງານປະກອບສ່ວນຂອງອາສາສະມັກຂັ້ນບ້ານທີ່ເຮັດວຽກເພື່ອຜົນປະໂຫຍດສ່ວນລວມຂອງບ້ານ

**ການປະສານງານຮ່ວມມືລະຫວ່າງໂຄງການ SCALING ແລະ NUSAP**

<u>ໝາກຜົນສໍາເລັດ</u>

- ທີມງານໂຄງການ SCALING ໄດ້ຮັບຮູ້ ແລະ ເຂົ້າໃຈວ່າໂຄງການ NUSAP ແມ່ນເຮັດວຽກໃນຈຸດປະສົງດຽວກັນ ແລະ ໄດ້ມີການປະສານຮ່ວມມືກັນໃນຂອດການຈັດປະຕິບັດກິດຈະກໍາໂຄງການຢູ່ຂັ້ນບ້ານເປົ້າໝາຍດຽວກັນ
- ທີມງານໂຄງການແຕ່ລະພາກສ່ວນໄດ້ມີການສື່ສານພົວພັນເຊິ່ງກັນ ແລະ ກັນໂດຍຕະຫຼອດມາ ແລະ ໄດ້ມີການເຊື້ອເຊີນເຂົ້າຮ່ວມກິດຈະກໍາສໍາຄັນຕ່າງໆ ທີ່ຈັດຂຶ້ນຢູ່ຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ
- ຢູ່ຂັ້ນບ້ານບັນດາປະຊາຊົນແມ່ນເຫັນໄດ້ ຢ່າງຊັດເຈນນໍາກັນວ່າ 2 ໂຄງການດັ່ງກ່າວນີ້ໄດ້ເປັນຕົວແທນ ສ້າງຄວາມເຂົ້າໃຈ ແລະ ການປະຕິບັດວຽກງານໂຄງການໃນຈຸດປະສົງດຽວກັນ

<u>ບັນຫາສິ່ງທີ່ທ້າທາຍ</u>

- ການໃຫ້ຜົນປະໂຫຍດ/ສິ່ງຕອບແທນນໍ້າໃຈອາສາສະມັກ/ຜູ້ປະສານງານຂັ້ນບ້ານ (ເປັນເງິນສົດ) ຂອງໂຄງການ NUSAP ຖືວ່າເປັນປັດໃຈສ່ຽງອັນໜຶ່ງຕໍ່ກັບການປະຕິບັດໂຄງການ SCALING ທີ່ບໍ່ໄດ້ໃຫ້ສິ່ງຕອບແທນນໍ້າໃຈອາສາສະມັກຂັ້ນບ້ານ ຄືກັນກັບໂຄງການ NUSAP
- ຍ້ອນວ່າບົດບັນທຶກຄວາມເຂົ້າໃຈຂອງໂຄງການ SCALING ໄດ້ຖືກເຊັນຮັບຮອງຫຼ້າຊ້ານັ້ນເຮັດໃຫ້ການປະຕິບັດແຜນກິດຈະກໍາໂຄງການບໍ່ບັນລຸຕາມຄາດໝາຍ ແລະ ເປັນສາເຫດກະທົບຕໍ່ການປະສານພົວພັນການຈັດຕັ້ງປະຕິບັດໂຄງການຮ່ວມກັບໂຄງການ NUSAP ມີອັນຫຼ້າຊ້າໄປຕາມໆກັນ

<u>ຂໍ້ສະເໜີແນະນໍາ</u>

- ສະເໜີໃຫ້ມີການພິຈາລະນາຄວາມເປັນໄປໄດ້ກ່ຽວກັບການໃຫ້ຜົນປະໂຫຍດ/ສິ່ງຕອບແທນນໍ້າໃຈອາສາສະມັກຂັ້ນບ້ານແບບເປັນເອກະພາບກັນເພື່ອຫຼີກລ້ຽງການສົມທຽບຂອງຊາວບ້ານທີ່ເຮັດວຽກເປັນອາສາສະມັກຄືກັນແຕ່ວ່າບໍ່ໄດ້ຮັບຜົນປະໂຫຍດຄືກັນ
- ຕ້ອງຮັບປະກັນວ່າທີມງານໂຄງການ SCALING ຈະໃຫ້ການສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກໍາໂຄງການ NUSAP ຢູ່ໃນບ້ານເປົ້າໝາຍດຽວກັນ. ຖ້າເຮັດໄດ້ເຊັ່ນນີ້ມັນຈະຊ່ວຍໃຫ້ຊາວບ້ານເຫັນໄດ້ພາບລວມຂອງທັງ 2 ໂຄງການທີ່ກໍາລັງປະຕິບັດໂຄງການໃນຈຸດປະສົງ ແລະ ທິດທາງດຽວກັນ ແລະ ຊຸມຊົນໄດ້ຮັບຜົນປະໂຫຍດລວມອັນດຽວກັນ
- ສະເໜີໃຫ້ມີການປະສານສົມທົບກັບທາງໂຄງການ NUSAP ເພື່ອກໍານົດທິດທາງແບບມີສ່ວນຮ່ວມ ແລະ ຊ່ວຍຊີ້ແຈງໃຫ້ຂັ້ນບ້ານມີຄວາມເຂົ້າໃຈເປັນເອະພາບຕໍ່ບັນດາໜ້າວຽກທີ່ຕິດພັນກັບໂພຊະນາການທີ່ 2 ໂຄງການໄດ້ໃຫ້ການສະໜັບສະໜູນໃນການຈັດຕັ້ງປະຕິບັດ

**ຈຸດປະສົງທີ 3: ການນໍາໃຊ້ເຄື່ອງມືວັດແທກຄຸນນະພາບຂອງການປະຕິບັດກິດຈະກໍາໂຄງການ Quality Benchmark (QB)**

<u>ໝາກຜົນສໍາເລັດ</u>

- ອີງຕາມຫຼັກການໂດຍລວມແລ້ວທີມງານໂຄງການ SCALING ແມ່ນມີຄວາມຄຸ້ນເຄີຍໃນການນໍາໃຊ້ເຄື່ອງມືວັດແທກຄຸນນະພາບຂອງການປະຕິບັດກິດຈະກໍາໂຄງການ ແລະ ເຫັນວ່າມັນມີຄວາມກ່ຽວພັນກັບໜ້າວຽກຕົວຈິງຂອງທີມງານແທ້
- ເຄື່ອງມືວັດແທກຄຸນນະພາບຂອງການປະຕິບັດກິດຈະກໍາໂຄງການ QB ນັ້ນສາມາດຊ່ວຍທີມງານປະຕິບັດກິດຈະກໍາໂຄງການໄປຕາມລະບົບ. ໃນຕໍ່ໜ້າບັນດາຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດທຸກພາກສ່ວນເຫັນວ່າມີຄວາມຈໍາເປັນຕ້ອງໄດ້ໃຊ້ເຄື່ອງມືດັ່ງກ່າວເຊັ່ນດຽວກັນ

Partnership for Improved Nutrition in Lao PDR Pillar 3:

Sustainable Change Achieved through Linking Improved Nutrition and Governance

- ພະນັກງານໂຄງການສ່ວນຫຼາຍ (91%) ໃນໄລຍະຜ່ານມາໄດ້ມີການຈັດປະຊຸມເພື່ອກໍານົດເຄື່ອງມື QB ຮ່ວມກັນ ແລະ 82% ຂອງພະນັກງານໂຄງການແມ່ນມີຄວາມເຊື່ອໝັ້ນວ່າວຽກໂຄງການໄດ້ເຂົ້າເຖິງກຸ່ມເປົ້າໝາຍແທ້

ບັນຫາສິ່ງທີ່ທ້າທາຍ

- ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດຈໍານວນໜຶ່ງໃນເວລາປະຕິບັດກິດຈະກໍາໂຄງການມັກຈະເຮັດຕາມຮູບແບບທີ່ຕົນເອງເຄີຍເຮັດຜ່ານມາ ແລະ ບໍ່ຄ່ອຍໃຫ້ຄວາມສົນໃຈຕໍ່ການນໍາໃຊ້ເຄື່ອງມື QB ດັ່ງກ່າວຫຼາຍເທົ່າທີ່ຄວນ
- ໃນໄລຍະຜ່ານມາເຄື່ອງມື QB ດັ່ງກ່າວບໍ່ທັນໄດ້ຖືກແນະນໍາໃຫ້ທຸກຂະແໜງການໄດ້ນໍາໃຊ້ຢ່າງເປັນເອກະພາບເທື່ອເນື່ອງຈາກວ່າທີມງານໂຄງການ SCALING ຍັງຮຽນຮູ້ ແລະ ທົດລອງນໍາໃຊ້ເຄື່ອງມືບາງອັນນໍາກັນຢູ່
- ເຄື່ອງມື QB ຈໍານວນໜຶ່ງແມ່ນຍັງມີຄວາມສັບສົນສໍາລັບຜູ້ນໍາໃຊ້ ແລະ ໄດ້ມີການແນະນໍາໃຫ້ບັນຄູ່ຮ່ວມຈັດຕັ້ງປະຕິບັດໂຄງການດັດປັບໃຫ້ມີຄວາມເຂົ້າໃຈ ແລະ ນໍາໃຊ້ງ່າຍຂຶ້ນ

ຂໍ້ສະເໜີແນະນໍາ

- ຕ້ອງຮັບປະກັນວ່າ ບັນດາເຄື່ອງມື QB ດັ່ງກ່າວໄດ້ຖືກນໍາໃຊ້ໂດຍທີມງານໂຄງການ ແລະ ບັນດາຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດໃນເວລາ ຈັດຕັ້ງປະຕິບັດກິດຈະກໍາໂຄງການທີ່ກ່ຽວຂ້ອງ
- ທີມງານໂຄງການ SCALING ຕ້ອງໄດ້ສົນທະນາແລກປ່ຽນກັບບັນດາຄູ່ຮ່ວມຈັດຕັ້ງປະຕິບັດໂຄງການພາກລັດ ວ່າເຂົາເຈົ້າມີຄວາມ ເຂົ້າໃຈຈຸດປະສົງ ແລະ ມີບົດຮຽນນໍາໃຊ້ ເຄື່ອງມື QB ດັ່ງກ່າວຫຼາຍໜ້ອຍສໍ່າໃດແລ້ວ
- ຖ້າສັງເກດເຫັນເຄື່ອງມື QB ອັນໃດຍັງມີຄວາມສັບສົນສໍາລັບຜູ້ນໍາໃຊ້ກໍ່ຕ້ອງໄດ້ມີການທົບທວນ ແລະ ດັດປັບໃຫ້ມີຄວາມເຂົ້າໃຈງ່າຍຂຶ້ນ ແລະ ແນະນໍາໃຫ້ແຕ່ລະພາກສ່ວນໄດ້ນໍາໃຊ້ເຄື່ອງມືນີ້ນໍາກັນຢ່າງເປັນປົກກະຕິດ້ວຍຄວາມຮັບຜິດຊອບເພື່ອຮັບປະກັນຄຸນນະພາບຂອງວຽກງານ

**ຈຸດປະສົງທີ 4: ຄວາມສອດຄ່ອງກິມກຽວ ແລະ ຄວາມເຂົ້າໃຈຂອງຂັ້ນຊຸມຊົນຕໍ່ກັບແຜນງານຕົວແບບຕ່າງໆຂອງໂຄງການ**

ໝາກຜົນສໍາເລັດ

- ຮູບແບບການຝຶກອົບຮົມຂອງໂຄງການ SCALING ເຊັ່ນວ່າ ການສື່ສານເພື່ອການປ່ຽນແປງພຶດຕິກໍາ ແລະ ຄວາມຊິນເຄີຍຂອງສັງຄົມດ້ານໂພຊະນາການ SBCC ແລະ ວຽກງານສະໜອງລະບົບນໍ້າ, ສຸຂາພິບານ ແລະ ສຸຂະອະນາໄມ WASH ມັນໄດ້ຊ່ວຍການຮັກສາສຸຂະພາບ ແລະ ສຸຂະອະນາໄມ ຂອງຊຸມຊົນໄດ້ດີຂຶ້ນ. ນອກຈາກນີ້ມັນຍັງໄດ້ຊ່ວຍໃຫ້ຄວາມຮູ້ກ່ຽວກັບວິທີການປຸງແຕ່ງອາຫານເສີມທີ່ໃຫ້ຄຸນຄ່າທາງໂພຊະນາການສໍາລັບເດັກ
- ພາຍຫຼັງໄດ້ເຂົ້າຮ່ວມຝຶກອົບຮົມກ່ຽວກັບວຽກແບ່ງເບົາພາລະຂອງແມ່ຍິງ ບັນດາແມ່ຍິງ ແລະ ຜູ້ຊາຍ ໄດ້ມີການໂອ້ລົມສົນທະນາແລກປ່ຽນຮຽນຮູ້ເຊິ່ງກັນ ແລະ ກັນ ແລະ ສັງເກດເຫັນວ່າຜູ້ຊາຍໄດ້ຊ່ວຍແບ່ງເບົາວຽກໃນຄົວເຮືອນຫຼາຍຂຶ້ນ
- ອາສາສະໝັກຂັ້ນບ້ານໄດ້ນໍາໃຊ້ບົດຮຽນປະສົບການຈາກການລົງຢ້ຽມຢາມຄອບຄົວເພື່ອກະຕຸກຊຸກຍູ້ໃຫ້ບັນດາຄອບຄົວທີ່ທຸກຈົນໄດ້ເຂົ້າຮ່ວມການຝຶກອົບຮົມທີ່ຈັດຢູ່ຂັ້ນບ້ານ. ການລົງຢ້ຽມຢາມຄອບຄົວຂອງອາສາສະໝັກຂັ້ນບ້ານຖືວ່າເປັນວຽກສໍາຄັນອັນໜຶ່ງທີ່ສ້າງຄວາມເຊື່ອໝັ້ນຕໍ່ກັນ
- ກຸ່ມທ້ອນເງິນຂອງແມ່ຍິງໄດ້ຮັບການສ້າງຕັ້ງຂຶ້ນຢູ່ຫຼາຍບ້ານ ເຊິ່ງວ່າມັນໄດ້ຊ່ວຍໃຫ້ບັນດາແມ່ຍິງທີ່ເປັນສະມາຊິກກຸ່ມທ້ອນເງິນສາມາດເຂົ້າເຖິງ ແລະ ກູ້ຢືມເງິນເພື່ອມາລົງທຶນສ້າງເສດຖະກິດຄອບຄົວ ແລະ ນໍາໃຊ້ໃນກໍລະນີສຸກເສີນຈໍາເປັນອື່ນໆ

ບັນຫາສິ່ງທີ່ທ້າທາຍ

- ການມີສ່ວນຮ່ວມຂອງບັນດາຊາວບ້ານໂດຍສະເພາະແມ່ນຄອບຄົວ/ກຸ່ມຜູ້ທີ່ທຸກຈົນຍັງເປັນບັນຫາສິ່ງທີ່ທ້າທາຍຢູ່ເພາະວ່າຕາມຄວາມເປັນຈິງແລ້ວຄອບຄົວ/ກຸ່ມຜູ້ທີ່ທຸກຈົນດັ່ງກ່າວສ່ວນຫຼາຍແລ້ວມັກເລືອກເຮັດທໍາການຜະລິດຂອງຄອບຄົວຫຼາຍກ່ວາເລືອກມາເຂົ້າຮ່ວມກິດຈະກໍາຝຶກອົບຮົມ

Save the Children | care | ສະຫະພາບ ເອີຣົບ European Union | CCL | ChildFund Laos

- ການໃຫ້ຄຳປຶກສາຂອງແມ່ຍິງ (ຜູ້ທີ່ຖືກຄັດເລືອກແຕ່ງຕັ້ງຢູ່ຂັ້ນບ້ານ) ຕໍ່ກັບໄວໜຸ່ມ ແລະ ຜູ້ຍິງກຳລັງລ້ຽງລູກດ້ວຍນົມແມ່ເຫັນວ່າຍັງມີຂໍ້ຈຳກັດຍ້ອນການປະຕິບັດຮີດຄອງປະເພນີ/ວັດທະນາທຳຂອງຊຸມຊົນໃນແຕ່ລະທ້ອງຖິ່ນ
- ການອາໄສຢູ່ເຂດຫ່າງໄກຊອກຫຼີກ ແລະ ການຂາດແຄນທາງດ້ານສະບຽງອາຫານເຮັດໃຫ້ມີຂໍ້ຈຳກັດຫຼາຍທີ່ຈະເຮັດການປຸງແຕ່ງອາຫານເສີມທີ່ໃຫ້ຄຸນຄ່າທາງໂພຊະນາການສຳລັບເດັກນ້ອຍໃນແຕ່ລະວັນ
- ການເຮັດວຽກຂອງບັນດາທີມງານໂຄງການ SCALING ຍັງຕ້ອງການຜູ້ຊ່ວຍແປພາສາທ້ອງຖິ່ນເນື່ອງຈາກວ່າບ້ານພື້ນທີ່ເປົ້າໝາຍຂອງໂຄງການແມ່ນກວມເອົາ 8 ຊົນເຜົ່າສ່ວນນ້ອຍ
- ຄວາມຮູ້/ທັກສະການຝຶກອົບຮົມຂອງອາສາສະມັກຂັ້ນບ້ານ ແລະ ການນຳໃຊ້ພາສາລາວເພື່ອສື່ສານກ່ຽວກັບວຽກງານ SBCC ຍັງມີຂໍ້ຈຳກັດຢູ່
- ການເຂົ້າເຖິງຕະຫຼາດ ແລະ ໂຮງໝໍນ້ອຍ/ສຸກສາລາ ຂອງຊຸມຊົນຍັງມີຂໍ້ຈຳກັດຍ້ອນວ່າຍັງມີຫຼາຍບ້ານຕັ້ງຢູ່ເຂດຫ່າງໄກຊອກຫຼີກ ແລະ ເສັ້ນທາງໄປມາຫາສູ່ກໍ່ບໍ່ສະດວກ
- ພະນັກງານໂຮງໝໍນ້ອຍ/ສຸກສາລາຈຳນວນໜຶ່ງພົບຂໍ້ຫຍຸ້ງຍາກໃນການປະຕິບັດໜ້າທີ່ຕໍ່ກັບແມ່ຍິງຊົນເຜົ່າທີ່ມາໃຊ້ບໍລິການຢູ່ສຸກສາລາໃຫ້ໄດ້ດີທີ່ສຸດເນື່ອງຈາກວ່າເຂົາເຈົ້າຍັງບໍ່ທັນມີຄວາມເຂົ້າໃຈຕໍ່ກັບຮີດຄອງປະເພນີ/ວັດທະນາທຳຂອງຊາວບ້ານຊົນເຜົ່າ
- ທາງພາກລັດໄດ້ຮັບຮູ້ນຳກັນດີແລ້ວວ່າການທີ່ພະນັກງານສຸກສາລາຕ້ອງໄດ້ມາເຂົ້າຮ່ວມການຝຶກອົບຮົມເຊິ່ງຈັດຂຶ້ນທຸກໆໄຕມາດນັ້ນ ເຂົາເຈົ້າຕ້ອງໄດ້ຂາດວຽກເພື່ອມາເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ

<u>ຂໍ້ສະເໜີແນະນຳ</u>

- ສະເໜີແນະນຳໃຫ້ອາສາສະມັກຂັ້ນບ້ານ/ຕາງໜ້າການຈັດຕັ້ງບ້ານຊ່ວຍກະຕຸກຊຸກຍູ້ໃຫ້ບັນດາຄອບຄົວທີ່ທຸກຈົນໄດ້ເຂົ້າມາມີສ່ວນຮ່ວມວຽກໂຄງການຢູ່ຂັ້ນຊຸມຊົນຫຼາຍຂຶ້ນ
- ສະເໜີໃຫ້ມີການກຳນົດຮີດຄອງທີ່ຊາວບ້ານຍັງມີການເຊື່ອຖື ແລະ ປະຕິບັດການຄະລຳອາຫານໃນຊ່ວງໄລຍະຖືພາ ແລະ ຊ່ວງໄລຍະ 6 ເດືອນທີ່ລ້ຽງລູກດ້ວຍນົມແມ່ພຽງຢ່າງດຽວ ພ້ອມທັງກຳນົດທິດທາງເພື່ອນຳສະເໜີແລກປ່ຽນ ແລະ ປັບປຸງແກ້ໄຂຮ່ວມກັນໃນຊ່ວງຈັດຝຶກອົບຮົມກ່ຽວກັບວຽກງານ SBCC
- ສະເໜີໃຫ້ມີການສົນທະນາແລກປ່ຽນຢູ່ຂັ້ນບ້ານເພື່ອຊອກຫາວິທີທາງຊ່ວຍບັນດາແມ່ຍິງທີ່ມີລູກນ້ອຍໄດ້ຫຼຸດຜ່ອນການໄປອອກແຮງງານໜັກຢູ່ບ່ອນທຳການຜະລິດໃນຊ່ວງໄລຍະເດືອນທີ່ແມ່ລ້ຽງລູກດ້ວຍນົມແມ່ພຽງຢ່າງດຽວ
- ສະເໜີໃຫ້ທີປຶກສາວິຊາການໃຫ້ຊ່ວຍລົງຕິດຕາມຊຸກຍູ້ ແລະ ໃຫ້ການສະໜັບສະໜູນບ່ອນທີ່ມີຄວາມຮຽກຮ້ອງຕ້ອງການ. ໃຫ້ມີການກຳນົດບັນຫາ ແລະ ປະເມີນຄວາມຕ້ອງການໆຊ່ວຍເຫຼືອຊຸມຊົນໃຫ້ທ່ວງທັນກັບເວລາ ພ້ອມທັງຊອກຫາວິທີການສື່ສານຕໍ່ກັບຊຸມຊົນດ້ວຍຮູບແບບຕ່າງໆໃຫ້ໄດ້ຮັບຜົນດີ
- ໃນຕໍ່ໜ້າສະເໜີໃຫ້ມີການພິຈາລະນາຈັດຝຶກອົບຮົມໃຫ້ແກ່ພະນັກງານໂຮງໝໍນ້ອຍ/ສຸກສາລາຈາກຝຶກຢູ່ນອກສະຖານທີ່ໃຫ້ເປັນການຝຶກອົບຢູຢູ່ກັບທີ່ (ບ່ອນປະຈຳການ)

**ຈຸດປະສົງທີ 5: ຄຳເຫັນແລກປ່ຽນຂອງຊຸມຊົນໃນເຂດພື້ນທີ່ເປົ້າໝາຍໂຄງການຕໍ່ກັບກິດຈະກຳຕ່າງໆຂອງໂຄງການ**

<u>ໝາກຜົນສຳເລັດ</u>

- ໄດ້ມີການລາຍງານວ່າບັນດາຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການທີ່ຜ່ານການຝຶກອົບຮົມແມ່ນໄດ້ນຳໃຊ້ບົດຮຽນ ແລະ ຄວາມຮູ້ໃໝ່ດ້ານໂພຊະນາການໃນຕົວຈິງເຊັ່ນວ່າ: ການປຸງແຕ່ງອາຫານເສີມທີ່ໃຫ້ຄຸນຄ່າທາງໂພຊະນາການຕໍ່ກັບເດັກ
- ບັນດາອາສາສະມັກຂັ້ນບ້ານທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳໂຄງການຢູ່ຂັ້ນຊຸມຊົນທັງໝົດແມ່ນໄດ້ຜ່ານການຄັດເລືອກໂດຍຊຸມຊົນຂອງເຂົາເຈົ້າເອງ ແລະ ວິທີການດັ່ງກ່າວນີ້ມັນໄດ້ຊ່ວຍໃຫ້ເຂົາເຈົ້າສາມາດປະຕິບັດໜ້າທີ່ມອບໝາຍຂອງຕົນໄດ້ຢ່າງເຕັມສ່ວນ ໂດຍສະເພາະແມ່ນບ້ານຊົນເຜົ່າທີ່ຍັງມີການປະຕິບັດ ວັດທະນາທຳ/ຮີດຄອງປະເພນີນຳກັນໃນຫຼາຍດ້ານ

<u>ບັນຫາສິ່ງທີ່ທ້າທາຍ</u>

- ການວາງແຜນປະຕິບັດກິດຈະກຳໂຄງການຢູ່ຂັ້ນບ້ານບາງຄັ້ງພາກສ່ວນຮັບຜິດຊອບບໍ່ໄດ້ແຈ້ງໃຫ້ຊາວບ້ານຮັບຊາບຂໍ້ມູນນຳຕາມທາງຄວນ

- ກິດຈະກຳໂຄງການທຸກຢ່າງເຫັນວ່າມີຜົນປະໂຫຍດຫຼາຍ ແຕ່ວ່າບາງຊຸມຊົນໄດ້ລາຍງານວ່າຄວາມຈຳເປັນພື້ນຖານຂອງຊຸມຊົນຍັງບໍ່ໄດ້ຮັບການແກ້ໄຂເທົ່າທີ່ຄວນເປັນຕົ້ນແມ່ນລະບົບນໍ້າຍ້ອນຫຼາຍເຫດຜົນ
- ໄດ້ມີການລາຍງານຈາກການນຳບ້ານຊຸມຊົນວ່າ ບັນດາອາສາສະມັກຂັ້ນບ້ານຈຳນວນຫຼາຍຍັງຂາດຄວາມຮູ້, ທັກສະວິຊາການ ແລະ ບໍ່ສາມາດໃຫ້ການຊ່ວຍເຫຼືອບັນດາຄອບຄົວທີ່ທຸກຈົນໄດ້ຫຼາຍເທົ່າທີ່ຄວນ (ຕົວຢ່າງ ຄວາມຮູ້ທາງດ້ານວິຊາການແພດ) ລວມທັງລະດັບຄວາມຮູ້, ການຍອມຮັບ ແລະ ຄວາມເຂົ້າໃຈຂອງຊຸມຊົນຕໍ່ກັບບົດຮຽນໃໝ່ຕ່າງໆ
- ອີງຕາມການສຶກສາໃຫ້ຮູ້ວ່າວັດທະນາທຳດ້ານການຄະລຳອາຫານຂອງປະຊາຊົນຫຼາຍຊົນເຜົ່າຍັງປະຕິບັດກັນຢູ່ຖືວ່າເປັນບັນຫາສິ່ງທີ່ທ້າທ້າຍອັນໜຶ່ງທີ່ບາງຢ່າງໃຫ້ມີອັນປັບປຸງແກ້ໄຂຮ່ວມກັນໃຫ້ດີຂຶ້ນໄປເທື່ອລະກ້າວ

<u>ຂໍ້ສະເໜີແນະນຳ</u>

- ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງມີການປະສານພົວພັນກັບການນຳບ້ານເພື່ອກຳນົດວິທີການປຸກລະດົມຊຸກຍູ້ ແລະ ຮັບປະກັນໃຫ້ທຸກຄອບຄົວເປົ້າໝາຍໄດ້ເຂົ້າຮ່ວມກິດຈະກຳໂຄງການຢ່າງທົ່ວເຖິງ
- ສະເໜີໃຫ້ມີການຈັດຝຶກອົບຮົມຄືນ (ຝຶກເຂັ້ມ) ໃຫ້ອາສາສະມັກຂັ້ນບ້ານ ຄວາມຮູ້ດ້ານວິຊາການ, ວິທີການອຳນວຍຄວາມສະດວກການຈັດຝຶກອົບຮົມ ລວມທັງຫຼັກການຮຽນຮູ້ຂອງຜູ້ໃຫຍ່
- ສະເໜີໃຫ້ມີການຍົກລະດັບຄວາມຮູ້ພື້ນຖານດ້ານການແພດ ພ້ອມທັງສະໜອງຢາ ແລະ ອຸປະກອນ ທີ່ຈຳເປັນພື້ນຖານໃຫ້ແກ່ບັນດາອາສາສະມັກຂັ້ນບ້ານ (ອສບ, ໝໍຕຳແຍ) ເພື່ອຮັບໃຊ້ໃນກໍລະນີສຸກເສີນ ຫຼື ບ້ານທີ່ຢູ່ຫ່າງໄກຊອກຫຼີກມີຂໍ້ຈຳກັດໃນການເຂົ້າເຖິງການບໍລິການຢູ່ສຸກສາລາ
- ສະເໜີໃຫ້ມີຈຸງານສະເພາະທີ່ສາມາດໃຫ້ຄຳປຶກສາແນະນຳກ່ຽວກັບດ້ານສຸຂະພາບ, ໂພຊະນາການ ແລະ ສຸຂະອະນາໄມ ຢູ່ໃນທີມງານຝຶກອົບຮົມຂອງທີມງານສຸກສາລາ

**ການປ້ອງກັນພະຍາດ COVID-19**

ໃນຊ່ວງໄລຍະການເກີດພະຍາດ COVID-19 ແລະ ການປະຕິບັດມາດຕະການປ້ອງກັນການແຜ່ລະບາດພະຍາດ COVID-19 ຂອງລັດຖະບານເຮັດໃຫ້ການປະຕິບັດກິດຈະກຳໂຄງການຫຼາຍຢ່າງມີອັນຫຼ້າຊ້າແກ່ຍາວ. ເຖິງຢ່າງໃດກໍ່ຕາມຕໍ່ກັບເຫດການດັ່ງກ່າວທາງໂຄງການ SCALING ກໍ່ໄດ້ເປັນສ່ວນໜຶ່ງທີ່ໄດ້ປະກອບສ່ວນເຂົ້າໃນການສະໜັບສະໜູນຕໍ່ການປະຕິບັດມາດຕະການປ້ອງກັນພະຍາດລະບາດ COVID-19 ດັ່ງກ່າວຢູ່ເຂດພື້ນທີ່ເປົ້າໝາຍໂຄງການ SCALING ຂອງພວກເຮົາ. ນອກນີ້ ທາງສະຫະພາບ ເອີຣົບ ກໍ່ໄດ້ໃຫ້ ສະໜັບສະໜູນໃຫ້ມີການໝູນໃຊ້ງົບປະມານຂອງໂຄງການ SCALING ຈຳນວນໜຶ່ງເພື່ອປະກອບສ່ວນເຂົ້າໃນວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກ ແລະ ສິ່ງທີ່ໄດ້ປະກອບສ່ວນຂອງໂຄງການມີດັ່ງຕໍ່ໄປນີ້:

1. ໃນຊ່ວງໄລຍະເວລາປິດຕົວເມືອງໃນຕົ້ນເດືອນເມສາ (4) ຜ່ານມາ ທາງໂຄງການໄດ້ສະໜອງອຸປະກອນການແພດສຸກເສີນຈຳນວນໜຶ່ງໃຫ້ໂຮງໝໍນ້ອຍຈຳນວນ 90 ແຫ່ງຢູ່ເຂດພື້ນທີ່ເປົ້າໝາຍໂຄງການ SCALING ແລະ ອຸປະກອນດັ່ງກ່າວລວມມີ ຜ້າອັດປາກ-ອັດດັງ, ສະບູແຫຼວ, ເຈວລ້າງມື ແລະ ຖົງມື ເພື່ອຮັບໃຊ້ເຂົ້າໃນການປະຕິບັດວຽກງານປ້ອງກັນພະຍາດ COVID-19 ຢູ່ 4 ແຂວງເປົ້າໝາຍ
2. ນອກຈາກການສະໜອງອຸປະກອນການແພດສຸກເສີນແລ້ວ ທາງອົງການ SCI ຍັງໄດ້ສະໜອງຊຸດນຸ່ງປ້ອງກັນໃນເວລາປະຕິບັດໜ້າທີ່ທາງການແພດໃຫ້ແກ່ພະແນກສາທາລະນະສຸກແຂວງຫຼວງພະບາງ ແລະ ຫ້ອງການສາທາລະນະສຸກນະຄອນ-ຫຼວງພະບາງ, ສະໜັບສະໜູນພາກລັດຖະບານໃນການຮັບ ແລະ ຝຶກອົບຮົມໃຫ້ສຶກສາການແພດເພື່ອປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ ປ້ອງກັນການ ແຜ່ລະບາດພະຍາດ COVID-19 ຢູ່ນະຄອນ-ຫຼວງພະບາງ. ສ່ວນທາງອົງການ CARE ກໍ່ໄດ້ຈັດສັນງົບປະມານຂອງໂຄງການໃນຈຳນວນ 130,000 ໂດລາ (ສະຫະລັດ) ເພື່ອຮັບໃຊ້ເຂົ້າໃນວຽກງານປ້ອງກັນພະຍາດ COVID-19 ຢູ່ແຂວງຫຼວງນ້ຳທາ
3. ນອກຈາກນີ້ທາງໂຄງການ SCALING ຍັງໄດ້ສ້າງສື່ຂໍ້ມູນຂ່າວສານກ່ຽວກັບວິທີການປ້ອງກັນພະຍາດ COVID-19 ໂດຍເຊື່ອມໂຍງເຂົ້າໃນກິດຈະກຳ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກ. ນອກນີ້ທາງໂຄງການຍັງມີຄວາມພ້ອມທີ່ໃຫ້ການສະໜັບສະໜູນກະຊວງສາທາລະນະສຸກ ແລະ ອົງການອະນາໄມໂລກ ໃນການຈັດຝຶກອົບຮົມກ່ຽວກັບການກຽມຄວາມພ້ອມເພື່ອການປິ່ນປົວຢູ່ໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍໃນ 4 ແຂວງເປົ້າໝາຍນຳອີກ ແລະ ອີກວຽກໜຶ່ງທີ່ເປັນບຸລິມະສິດຂອງໂຄງການແມ່ນໃຫ້ມີການສືບຕໍ່ປະຕິບັດວຽກບໍລິການເຄື່ອນທີ່ເຊື່ອມສານຢູ່ບັນດາບ້ານເປົ້າໝາຍໂຄງການເພື່ອຮັບປະການການເຂົ້າເຖິງການບໍລິການຮັກສາສຸຂະພາບຂອງແມ່ກ່ອນ ແລະ ຫຼັງເກີດ, ການສັກ

ຢາປ້ອງກັນພະຍາດ ແລະ ເຊື່ອມໂຍງ ຂໍ້ມູນຂ່າວສານ ແລະ ຄວາມຮູ້ກ່ຽວກັບວິທ◌ີການປ້ອງກັນພະຍາດ COVID-19 ໄປພ້ອມໆກັນ ຫຼັງຈາກຖືກຢຸດສະຫງັດໃນຊ່ວງໄລຍະປິດເມືອງຍ້ອນການເກີດພະຍາດ COVID-19

4. ອີກບຸລິມະສິດໜຶ່ງທີ່ນອນຢູ່ໃນແຜນງານ SBCC ແມ່ນສະໜັບສະໜູນຜູ້ອຳນວຍຄວາມສະດວກ/ອາສາສະມັກຂັ້ນບ້ານສືບຕໍ່ລົງຢ້ຽມຢາມໃຫ້ຄຳປຶກສາແນະນຳຄອບຄົວ 1,000 ວັນ ແບບປອດໄພ ພ້ອມທັງເຊື່ອມໂຍງ ຂໍ້ມູນຂ່າວສານ ແລະ ຄວາມຮູ້ກ່ຽວກັບວິທີການປ້ອງກັນພະຍາດ COVID-19 ໄປພ້ອມໆກັນໂດຍນຳໃຊ້ສື່/ອຸປະກອນທີ່ທາງໂຄງການໄດ້ສ້າງຂຶ້ນມາ
5. ໃນການກັບມາປະຕິບັດໜ້າທີ່ການ ສິ່ງສຳຄັນແມ່ນການປັບປ່ຽນຮູບແບບການເຮັດວຽກຂອງພວກເຮົາໃຫ້ເຂົ້າສູ່ "ລະບົບປົກກະຕິຄືນໃໝ່" ດ້ວຍການຝຶກອົບຮົມ ຄວາມຮູ້ກ່ຽວກັບວິທີການປ້ອງກັນພະຍາດ COVID-19 ໃຫ້ແກ່ພະນັກງານໂຄງການກ່ອນໜ້າລົງໄປເຮັດວຽກຢູ່ພາກສະໜາມຂອງໂຄງການ ແລະ ວາງມາດຕະການປ້ອງກັນຮ່ວມກັນ ເພື່ອຮັບປະກັນວ່າການດຳເນີນກິດຈະກຳກໍ່ສ້າງລະບົບນ້ຳລິນສຳເລັດຕາມຈຸດປະສົງລະດັບຄາດໝາຍ ພ້ອມທັງໃຫ້ມີຄວາມປອດໄພກັບທຸກສ່ວນ



ຮູບພາບການນຳໃຊ້ອຸປະກອນການແພດເຂົ້າໃນວຽກງານ ຕົວຈິງຢູ່ໂຮງໝໍຊຸມຊົນ, ແຂວງຫຼວງນ້ຳທາ



ຮູບພາບການນຳໃຊ້ເຈວລ້າງມືເພື່ອປ້ອງກັນພະຍາດ COVID-19 ຢູ່ແຂວງຫຼວງນ້ຳທາ







ຮູບພາບສື່ແນະນຳອາສາສະມັກຂັ້ນບ້ານໃນການລົງຢ້ຽມຢາມຄອບຄົວແບບປອດໄພ

*ຖ້າທ່ານໃດມີຄຳຄິດເຫັນ, ຂໍ້ແນະນຳ ຫຼື ຕ້ອງການສັ່ງຈອງຈົດໝາຍຂ່າວປະຈຳ 6 ເດືອນຂອງພວກເຮົາ ກະລຸນາຕິດຕໍ່ພົວພັນນຳ ທ່ານ ຫຸມພັນ ສຸລິວົງໄຊ ໄດ້ໃນທາງອີເມວ: Houmphanh.Soulivongxay@savethechildren.org.*

*ຈົດໝາຍຂ່າວນີ້ຖືກຈັດພິມຂຶ້ນໂດຍທຶນສະໜັບສະໜູນຈາກ ສະຫະພາບ ເອີຣົບ. ສ່ວນເນື້ອໃນ ແລະ ຮູບພາບປະກອບຈົດໝາຍຂ່າວດັ່ງກ່າວນີ້ແມ່ນຝ່າຍອົງການຊ່ວຍເຫຼືອເດັກ ແລະ ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ SCALING ເປັນຜູ້ຮັບຜິດຊອບໃນການຂຽນ*